**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ
ຫ້ອງການ ຄຊກລ                                                                 ເລກທີ          /ຫຄຊກລ.ຄມ

ນະຄອນຫລວງວຽງຈັນ, ວັນທີ 21 ມິຖຸນາ 2024

# ບົດບັນທຶກກອງປະຊຸມ

# ວິຊາການກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານ ລບຕ ປະຈຳໄຕມາດ 2 ປີ 2024

## I ວັນເວລາ, ສະຖານທີ່ ແລະ ຜູ້ເຂົ້າຮ່ວມ

ກອງປະຊຸມວິຊາການກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານ ລບຕ ປະຈຳໄຕມາດ 2 ປີ 2024 ທີ່ຫ້ອງປະຊຸມຂອງໂຮງແຮມລາວເທວ ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ຄຳມຸງຄຸນ ສຸດທິວົງ, ຫົວໜ້າໜ່ວຍງານຄຸ້ມຄອງຂໍ້ມູນຂ່າວສານ ຂອງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ (ຫ້ອງການ ຄຊກລ) ແລະ ມີຜູ້ເຂົ້າຮ່ວມຄື: ຊ່ຽວຊານຕາງໜ້າຈາກອົງການສະຫະປະຊາຊາດ, ໜ່ວຍງານຄຸ້ມຄອງການສຳຫຼວດ ແລະ ກວດກູ້, ໜ່ວຍງານຄຸ້ມຄອງການກວດກາຄຸນນະພາບ, ວິຊາການໜ່ວຍງານຄຸ້ມຄອງຂໍ້ມູນຂ່າວສານ ແລະ ໜ່ວຍງານໂຄສະນາ ສຶກສາຄວາມສ່ຽງໄພ, ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຫ້ອງການ ຄຊກລ, ວິຊາການ ແລະ ຊ່ຽວຊານ ຈາກ 08 ອົງການມະນຸດສະທຳ (ອົງການເອັນພີເອ, ອົງການຮາໂລທຣັສ, ອົງການແມັກປະຈຳ ສປປ ລາວ, ກອງກວດກູ້ເພື່ອມະນຸດສະທຳກອງທັບ 58, ອົງການສຶກສາໂລກ, ສະມາຄົມຄົນພິການແຫ່ງຊາດ, ສູນການແພດຟື້ນຟູໜ້າທີ່ການ, ສະມາຄົມຄົນພິການແຫ່ງຊາດ), ບໍລິສັດມິນເຊີດເກັບກູ້ລະເບີດ ແລະ ບໍລິສັດລ້ານຊ້າງເກັບກູ້ລະເບີດ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 30 ທ່ານ ເປັນເພດຍິງ 11 ທ່ານ (37 ສ່ວນຮ້ອຍ) ແລະ ຜູ້ພິການ 3 ທ່ານ (30 ສ່ວນຮ້ອຍ ຂອງຜູ້ເຂົ້າຮ່ວມທັງໝົດ).

## II ຈຸດປະສົງ

1. ເພື່ອລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດ ກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານໃນ ຂະແໜງການ ລບຕ ປະຈຳໄຕມາດ 2 ພ້ອມທັງນຳສະເໜີ ແຜນໄຕມາດ 3 ປີ 2024;
2. ເພື່ອນຳສະເໜີ Monthly progress report ໃນ ArcGIS online;
3. ເພື່ອລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການ ສ້າງຄວາມອາດສາມາດ ໃນການຄຸ້ມຄອງຂໍ້ມູນຂ່າວສານທີ່ຈັດຕັ້ງປະຕິບັດຮ່ວມກັບອົງການ ເອັນພີເອ;
4. ເພື່ອນຳສະເໜີ ແບບຟອມການເກັບກຳຂໍ້ມູນຜົນສຳເລັດ ທີ່ອອກແບບຢູ່ໂປຣແກັມ Survey 123;
5. ການນຳເຂົ້າຂໍ້ມູນ ຈາກ ArcGIS online ມາສູ່ລະບົບ IMSMA NG
6. ເພື່ອໃຫ້ອົງການປະຕິບັດງານ ນຳສະເໜີ ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍ ໃນການລາຍງານຂໍ້ມູນ;
7. ເພື່ອນຳສະເໜີ ຄວາມຄືບໜ້າ ການເຊື່ອມສານບົດບາດຍິງຊາຍ ໃນຂະແໜງການ ລບຕ.

## III ເນື້ອໃນກອງປະຊຸມ

- ສະຫຼຸບ ການເຄື່ອນໄຫວວຽກງານກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານ ແລະ ສະຖິຕິການປະຕິບັດງານ ໃນຂະແໜງການ ລບຕ ສະເພາະໄຕມາດ 2 ປີ 2024;



ບ້ານໜອງບອນ, ເມືອງ ໄຊເສດຖາ ຕູ້ ປນ: 7261, ນະຄອນຫຼວງວຽງຈັນ, ໂທລະສັບ: 021 262419, 262386, ແຟັກ: 856 21 262396; ອີເມວ:
UXO.nra@gmail.com www.nra.gov.la

- ຮັບຟັງ ສະຫຼຸບການເຄື່ອນໄຫວວຽກງານກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານປະຈຳໄຕມາດ 2 ປີ 2024 ແລະ ແຜນການປະຕິບັດງານ ໄຕມາດ 3 ປີ 2024 ຂອງອົງການປະຕິບັດງານ;
- ນຳສະເໜີກ່ຽວກັບ Monthly progress report ໃນ ArcGIS online;
- ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການ ສ້າງຄວາມອາດສາມາດ ໃນການຄຸ້ມຄອງຂໍ້ມູນຂ່າວສານ ທີ່ຈັດຕັ້ງປະຕິບັດຮ່ວມກັບອົງການ ເອັນພີເອ;
- ເພື່ອນຳສະເໜີ ແບບຟອມການເກັບກຳຂໍ້ມູນຜົນສຳເລັດ ທີ່ອອກແບບຢູ່ໂປຣແກັມ Survey 123;
- ເພື່ອໃຫ້ອົງການປະຕິບັດງານ ນຳສະເໜີ ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍ ໃນການລາຍງານຂໍ້ມູນ;
- ນຳສະເໜີ ກ່ຽວກັບການນຳສົ່ງຂໍ້ມູນບົດລາຍງານການກວດກູ້ ຈາກລະບົບ ArcGIS online ມາ IMSMA NG ໂດຍ ຊ່ຽວຊານຈາກອົງການເອັນພີເອ;

## IV. ຂໍ້ສະເໜີ ແລະ ຂໍ້ຕົກລົງ ພາຍໃນກອງປະຊຸມ

- ຫ້ອງການ ຄຊກລ ສະເໜີ ໃຫ້ອົງການ ປະຕິບັດງານ ລາຍງານແຜນການປະຕິບັດງານການສຳຫຼວດວິຊາການປະຈຳປີ 2024 ໃຫ້ຫ້ອງການ ຄຊກລ. ໂດຍສະເພາະ ອົງການ UXO Lao, MAG ແລະ ກອງກວດກູ້ ເພື່ອມະນຸດສະທຳກອງທັບ 58;
- ຫ້ອງການ ຄຊກລ ສະເໜີ ໃຫ້ທາງຊ່ຽວຊານ ອົງການເອັນພີເອ ຝຶກອົບຮົມໃຫ້ພະນັກງານຫ້ອງການ ຄຊກລ ໃນການນຳສົ່ງຂໍ້ມູນ ຈາກລະບົບ IMSMA NG ໄປຫາ ArcGIS online ພາຍໃນໄຕມາດ 4 ປີ 2024;
- ຫ້ອງການ ຄຊກລ ສະເໜີຫາອົງການແມັກ ໃຫ້ລາຍງານກ່ຽວກັບການແກ້ໄຂຂໍ້ມູນ ທີ່ບໍ່ທັນກັບເວລາ ໃນກອງປະຊຸມການແກ້ໄຂຂໍ້ມູນ ທີ່ບໍ່ສົມບູນ ທີ່ຈະຈັດໃນເດືອນ ກໍລະກົດ ທີ່ຈະມາເຖິງ;
- ສະເໜີ ທາງອົງການເຫີລາ, ຖ້າຫາກວ່າ ເນື້ອໃນຢູ່ໃນແບບຟອມ ຍັງບໍ່ຄົບຖ້ວນແລະ ບໍ່ສອດຄ່ອງ ຕາມການປະຕິບັດງານຕົວຈິງ ແມ່ນໃຫ້ລາຍງານ ຫາຫ້ອງການ ຄຊກລ ໜ່ວຍງານ ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ. ເພາະວ່າແບບຟອມ ເຮົາອອກແບບຕາມການສະເໜີຂອງໜ່ວຍງານດັ່ງກ່າວ;
- ຫຼັງຈາກການປັບປຸງແບບຟອມໃນເຄື່ອງມື Survey 123 ສຳເລັດ, ຫ້ອງການ ຄຊກລ ຈະຈັດການຝຶກອົບຮົມໃຫ້ ອົງການປະຕິບັດງານ ແລະ ບໍລິສັດເກັບກູ້ລະເບີດ ສະເພາະ.

ປະທານກອງປະຊຸມ ໄດ້ກ່າວປິດກອງປະຊຸມ. ຫຼັງຈາກນັ້ນ, ທ່ານໄດ້ກ່າວຄຳຂອບໃຈບັນດາຜູ້ແທນທີ່ເສຍສະຫຼະເວລາ ເຂົ້າຮ່ວມກອງປະຊຸມວິຊາການຄັ້ງນີ້ ພ້ອມທັງອວຍພອນໃຫ້ບັນດາຜູ້ແທນຈາກອົງການປະຕິບັດງານ ລບຕ ມີສຸຂະພາບເຂັ້ມແຂງ, ພາລະນາໄມສົມບູນ ແລະ ກ່າວປິດກອງປະຊຸມ.

ກອງປະຊຸມໄດ້ປິດລົງໃນເວລາ 15:00 ໂມງ ຂອງວັນທີ 20 ມິຖຸນາ 2024.

| | |
|---|---|
| **ໜ່ວຍງານຄຸ້ມຄອງຂໍ້ມູນຂ່າວສານ** | **ຜູ້ບັນທຶກ** |
| **ທ່ານ ຄຳມຸງຄຸນ ສຸດທິວົງ** | **ນາງ ເມກະຂະຫຼາ ສີຫາລາດ** |


ບ້ານໜອງບອນ, ເມືອງ ໄຊເສດຖາ ຕູ້ ປນ: 7261, ນະຄອນຫຼວງວຽງຈັນ, ໂທລະສັບ: 021 262419, 262386, ແຟັກ: 856 21 262396; ອີເມວ: UXO.nra@gmail.com www.nra.gov.la